**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ

ເລກທີ 102 /ນຍ

ວຽງຈັນ, ວັນທີ 14-7-2000

# ດຳລັດ

## ວ່າດ້ວຍຄັງສຳຮອງເງິນຕາຕ່າງປະເທດຂອງລັດ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ເລກທີ 01/ສພຊ, ລົງວັນທີ 8 ມີນາ 1995;
- ອີງຕາມກົດໝາຍ ວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1995 ແລະ ສະບັບດັດແປງເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999.
- ອີງຕາມການສະເໜີ ຂອງຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 148/ທຫລ ລົງວັນທີ 22 ພຶດສະພາ 2000.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ :**

## ໝວດທີ I
## ຂໍ້ກຳນົດທົ່ວໄປ

**ມາດຕາ 1 : ຄວາມໝາຍຄັງສຳຮອງເງິນຕາຕ່າງປະເທດຂອງລັດ.**

ຄັງສຳຮອງເງິນຕາຕ່າງປະເທດຂອງລັດ ໝາຍເຖິງຊັບສິນເປັນເງິນຕາຕ່າງປະເທດ ຊຶ່ງເປັນກຳມະສິດຂອງລັດ ໂດຍແມ່ນລັດຖະບານມອບໃຫ້ທະນາຄານ ແຫ່ງ ສປປລາວ ເປັນຜູ້ຄຸ້ມຄອງບໍລິຫານ ເພື່ອແນໃສ່ປະຕິບັດນະໂຍບາຍເສດຖະກິດ-ເງິນຕາ, ຮັກສາສະຖຽນລະພາບເງິນຕາແຫ່ງຊາດ ແລະ ຮັບປະກັນແກ່ການຊຳລະລະຫວ່າງປະເທດ.

**ມາດຕາ 2 : ຄຳນິຍາມ**

ເງິນຕາຕ່າງປະເທດ ໃນດຳລັດສະບັບນີ້ ໝາຍເຖິງ :

1. ຄຳ ( ຄຳເງິນຕາ );
2. ເງິນຕາຕ່າງປະເທດຊຶ່ງເປັນທະນະບັດ; ເງິນຫຼຽນ ຫຼືເງິນຝາກໃນບັນຊີຢູ່ທະນາຄານຕ່າງປະເທດ

ດ້ວຍສະກຸນເງິນແຂງໃດໜຶ່ງ ຕາມການຕົກລົງເຫັນດີຂອງສະພາບໍລິຫານທະນາຄານແຫ່ງ ສປປ ລາວ;

3. ຊັບສິນທີ່ສາກົນຮັບຮູ້ວ່າເປັນເງິນຕາຕ່າງປະເທດ

   - ເງິນສຳຮອງຂອງ ສປປ ລາວ ຢູ່ກອງທຶນສາກົນ;
   - ສິດຖອນເງິນພິເສດຂອງ ສປປ ລາວ ໃນກອງທຶນສາກົນຊຶ່ງເອີ້ນວ່າເງິນເດເຕແອສ ;

4. ພັນທະບັດແລກເງິນ, ໃບສັນຍາໃຊ້ໜີ້, ພັນທະບັດຄັງເງິນ ແລະ ພັນທະບັດອື່ນໆທີ່ຈຳໜ່າຍ ຫຼື ຄ້ຳປະກັນໂດຍລັດຖະບານຕ່າງປະເທດ ຫຼື ສະຖາບັນການເງິນສາກົນເປັນເງິນຕາຕ່າງປະເທດສະກຸນໃດໜຶ່ງ ເງິນຕາຕ່າງປະເທດດັ່ງກ່າວສາມາດຊຳລະຢູ່ພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງເຫັນດີ ຂອງສະພາບໍລິຫານທະນາຄານແຫ່ງ ສປປ ລາວ;

5. ຊັບສິນອື່ນໆທີ່ຖືວ່າເປັນເງິນຕາຕ່າງປະເທດຕາມການຕົກລົງຂອງສະພາບໍລິຫານ ເພື່ອຮັບປະກັນການຊຳລະສາກົນ.

**ມາດຕາ 3. ຫຼັກການຄຸ້ມຄອງ**

ການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດຂອງລັດ ຕ້ອງປະຕິບັດຫຼັກການຮັບປະກັນຄວາມປອດໄພ, ນຳໃຊ້ຢ່າງຄ່ອງຕົວ ແລະມີປະສິດທິພາບໃນການລົງທຶນ.

**ມາດຕາ 4. ມາດຖານຂອງສະກຸນເງິນຕາຕ່າງປະເທດ**

ເງິນຕາຕ່າງປະເທດສະກຸນຕ່າງໆ ຂອງຄັງສຳຮອງເງິນຕາຕ່າງປະເທດຂອງລັດ ຕ້ອງເປັນສະກຸນເງິນຕາຕ່າງປະເທດທີ່ສາກົນຍອມຮັບ, ສາມາດຊຳລະສາກົນ ແລະ ແລກປ່ຽນ ຊື້-ຂາຍ ໄດ້ຢ່າງເສລີໃນຕະຫລາດສາກົນ.

**ມາດຕາ 5. ມາດຖານຂອງເອກະສານທີ່ມີຄ່າເປັນເງິນຕາຕ່າງປະເທດ**

ໃບສັນຍາໃຊ້ໜີ້ ແລະເອກະສານໜີ້ ທີ່ມີຄ່າເປັນເງິນຕາຕ່າງປະເທດ ໃນຄັງສຳຮອງເງິນຕາຕ່າງປະເທດຂອງລັດ ທີ່ລັດຖະບານຕ່າງປະເທດ, ອົງການການເງິນສາກົນຈຳໜ່າຍ ຫຼືຄ້ຳປະກັນນັ້ນ ຕ້ອງໄດ້ຮັບຄວາມເຊື່ອຖືສູງໃນບັນຊີການຈັດລະດັບຄວາມເຊື່ອຖືຂອງສາກົນແຕ່ລະໄລຍະ.

**ມາດຕາ6. ມາດຖານຂອງສະຖາບັນຕົວແທນໝູນທຶນ**

ສະຖາບັນທີ່ເລືອກເປັນຕົວແທນ ເພື່ອມອບໝາຍໃຫ້ເປັນຕົວແທນໝູນທຶນນັ້ນ ຕ້ອງເປັນສະຖາບັນ ທີ່ໄດ້ຮັບການຈັດລະດັບຄວາມເຊື່ອຖືສູງໃນບັນຊີການຈັດລະດັບຄວາມເຊື່ອຖືຂອງສາກົນແຕ່ລະໄລຍະ ແລະຢູ່ພາຍໃຕ້ການຄຸ້ມຄອງ ຂອງສະຖາບັນຄຸ້ມຄອງການເງິນ-ເງິນຕາ ຂອງປະເທດກ່ຽວຂ້ອງ.

**ມາດຕາ 7. ປະເພດຄັງສຳຮອງເງິນຕາຕ່າງປະເທດຂອງລັດ**

ຄັງສຳຮອງເງິນຕາຕ່າງປະເທດຂອງລັດ ແບ່ງອອກເປັນສອງປະເພດ ດັ່ງນີ້:

1. ຄັງສຳຮອງເງິນຕາຕ່າງປະເທດຂອງລັດຖະບານ;
2. ຄັງດັດສົມເງິນຕາຕ່າງປະເທດຂອງລັດຖະບານ ໃນນີ້ປະກອບມີ:
   - ຄັງແຮເພື່ອດັດສົມເງິນຕາຕ່າງປະເທດ;
   - ຄັງແຊກແຊງອັດຕາແລກປ່ຽນ.

## ໝວດທີ II
## ຄັງສຳຮອງເງິນຕາຕ່າງປະເທດຂອງລັດຖະບານ

**ມາດຕາ 8. ແຫລ່ງຄັງສຳຮອງເງິນຕາຕ່າງປະເທດຂອງລັດຖະບານ**

ຄັງສຳຮອງເງິນຕາຕ່າງປະເທດຂອງລັດຖະບານ ໄດ້ມາຈາກແຫລ່ງລາຍຮັບງົບປະມານທີ່ເປັນເງິນຕາຕ່າງປະເທດເຊັ່ນ: ເງິນຂາຍໄມ້, ຂາຍໄຟຟ້າ, ຄ່າບໍລິການການບິນ ແລະ ອື່ນໆ.

**ມາດຕາ 9. ການນຳໃຊ້**

ລັດຖະບານ ນຳໃຊ້ຄັງສຳຮອງເງິນຕາຕ່າງປະເທດຂອງລັດຖະບານ ຕາມແຜນງົບປະມານທີ່ໄດ້ຮັບຮອງຮອງຈາກສະພາແຫ່ງຊາດ. ກະຊວງການເງິນ ເປັນຜູ້ປະຕິບັດການຈ່າຍ ຕາມການຕົກລົງຂອງລັດຖະບານ ເພື່ອປະຕິບັດເປົ້າໝາຍດັ່ງນີ້:

1. ໃຊ້ແທນໜີ້ສິນຕ່າງປະເທດ;
2. ດຸ່ນດ່ຽງງົບປະມານ;
3. ຂາຍໃຫ້ທະນາຄານ ແຫ່ງ ສປປ ລາວ;

**ມາດຕາ 10. ການຄຸ້ມຄອງ**

ຄັງເງິນແຫ່ງຊາດ ຂອງກະຊວງການເງິນ ເປີດບັນຊີເງິນຝາກຄັງສຳຮອງເງິນຕາຕ່າງປະເທດຂອງລັດຖະບານ ຢູ່ທະນາຄານ ແຫ່ງ ສປປ ລາວ. ທະນາຄານ ແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງ ແລະນຳໃຊ້ເງິນໃນຄັງສຳຮອງເງິນຕາຕ່າງປະເທດຂອງລັດຖະບານ ໂດຍການນຳເອົາໄປຝາກ, ຊື້-ຂາຍ ເງິນຕາຕ່າງປະເທດ ຢູ່ຕ່າງປະເທດ; ຊື້-ຂາຍ ເອກະສານທີ່ມີຄ່າເປັນເງິນຕາຕ່າງປະເທດ ຫຼື ດ້ວຍການໝູນທຶນອື່ນໆ ຕາມການຕົກລົງເຫັນດີຂອງນາຍົກລັດຖະມົນຕີ. ໃນການໝູນທຶນ ທະນາຄານ ແຫ່ງ ສປປ ລາວ ຕ້ອງປະຕິບັດຫລັກການທີ່ກຳນົດໄວ້ໃນມາດຕາ 3 ຂອງດຳລັດສະບັບນີ້.

## ໝວດທີ III
## ຄັງແຮເພື່ອດັດສົມເງິນຕາຕ່າງປະເທດ

**ມາດຕາ 11. ແຫຼ່ງຄັງແຮເພື່ອດັດສົມເງິນຕາຕ່າງປະເທດ**

ຄັງແຮເພື່ອດັດສົມເງິນຕາຕ່າງປະເທດຂອງລັດຖະບານ ໄດ້ມາຈາກການເກັບຊື້ເງິນຕາຕ່າງປະເທດ ແລະ ເງິນຕາຕ່າງປະເທດ ທີ່ເປັນກຳມະສິດຂອງລັດຖະບານ ຊຶ່ງທະນາຄານແຫ່ງ ສປປ ລາວ ຄຸ້ມຄອງກ່ອນດຳລັດສະບັບນີ້ມີຜົນສັກສິດ.

**ມາດຕາ 12. ລະດັບຄັງແຮເພື່ອດັດສົມເງິນຕາຕ່າງປະເທດ**

ທະນາຄານ ແຫ່ງ ສປປ ລາວ ຕ້ອງຮັກສາລະດັບຄັງແຮເພື່ອດັດເງິນຕ່າງປະເທດ ໃຫ້ພຽງພໍແກ່ການນຳເຂົ້າສິນຄ້າຂອງປະເທດ ບໍ່ຕ່ຳກວ່າສອງເດືອນ, ໃນກໍລະນີ ທີ່ຄັງດັ່ງກ່າວ ຫາກຕ່ຳກວ່າລະດັບທີ່ກຳນົດໄວ້ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ຕ້ອງລາຍງານ ແລະສະເໜີມາດຕາການແກ້ໄຂຕໍ່ລັດຖະບານ.

**ມາດຕາ 13. ການນຳໃຊ້**

ຄັງແຮເພື່ອດັດສົມເງິນຕາຕ່າງປະເທດ ໃຫ້ນຳໃຊ້ ດັ່ງນີ້:

1. ດັດສົມແກ່ຄັງແຊກແຊງອັດຕາແລກປ່ຽນ ເມື່ອຄັງດັ່ງກ່າວຫາກບໍ່ພຽງພໍຕາມລະດັບກຳນົດໄວ້ ຫຼື ເຫັນວ່າຈຳເປັນ;
2. ໝູນທຶນ ເຊັ່ນ: ການຝາກ, ການຊື້-ຂາຍ ເງິນຕາຕ່າງປະເທດ ແລະ ເອກະສານທີ່ມີຄ່າເປັນເງິນຕາຕ່າງປະເທດ;
3. ໃຊ້ຈ່າຍເວລາສຸກເສີນຮີບດ່ວນ ເມື່ອລັດຖະບານເຫັນວ່າມີຄວາມຈຳເປັນທີ່ສຸດ.

**ມາດຕາ 14. ການຄຸ້ມຄອງ**

ທະນາຄານ ແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງ ຄັງແຮເພື່ອດັດສົມເງິນຕາຕ່າງປະເທດ, ເປັນນາຍບັນຊີໃຫ້ແກ່ລັດຖະບານ, ປະຕິບັດການໃຊ້ຈ່າຍຕາມການຕົກລົງຂອງລັດຖະບານ ແລະ ນຳໃຊ້ຄັງແຮເພື່ອດັດສົມເງິນຕາຕ່າງປະເທດ ຕາມທີ່ກຳນົດໄວ້ໃນມາດຕາ 13 ຂອງດຳລັດສະບັບນີ້. ໃນການໝູນທຶນ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ເປັນຜູ້ຕົກລົງ ແລະ ຮັບຜິດຊອບບໍ່ໃຫ້ເສຍຫາຍ, ທັງຮັບປະກັນການນຳໃຊ້ຢ່າງຄ່ອງຕົວ ໃນເມື່ອມີຄວາມຕ້ອງການ ແລະ ມີປະສິດທິຜົນ.

**ມາດຕາ 15. ສິດ ແລະໜ້າທີ່ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໃນການຄຸ້ມຄອງ ຄັງແຮເພື່ອດັດສົມເງິນຕາຕ່າງປະເທດຂອງລັດຖະບານ**

ໃນການຄຸ້ມຄອງຄັງແຮເພື່ອດັດສົມເງິນຕາຕ່າງປະເທດ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ກໍານົດໂຄງປະກອບຂອງຄັງແຮ່ເພື່ອດັດສົມເງິນຕາຕ່າງປະເທດຂອງລັດຖະບານ ເຊັ່ນ:
   1.1 ກໍານົດສະກຸນເງິນຕາຕ່າງປະເທດ ທີ່ເຫັນວ່າຈໍາເປັນຕ້ອງສະສົມ;
   1.2 ອັດຕາສ່ວນຂອງແຕ່ລະສະກຸນເງິນຕາຕ່າງປະເທດ;
   1.3 ອັດຕາສ່ວນຂອງປະເພດການໝູນທຶນໃນໄລຍະສັ້ນ, ກາງ ແລະ ໄລຍະຍາວຂອງແຕ່ລະສະກຸນເງິນຕາຕ່າງປະເທດ;
2. ຮູບການໝູນທຶນ ແລະກໍານົດເວລາໃນການລົງທຶນ;
3. ເລືອກເຟັ້ນຄູ່ກໍລະນີ ໃນການໝູນທຶນ ແລະຕົວແທນໃນການໝູນທຶນ.

**ມາດຕາ 16. ສິດໃນການສັ່ງຈ່າຍ**

ນາຍົກລັດຖະມົນຕີ ຫຼື ຜູ້ທີ່ໄດ້ຮັບການມອບສິດຈາກນາຍົກລັດຖະມົນຕີ ເປັນຜູ້ມີສິດສັ່ງຈ່າຍເງິນຈາກຄັງແຮເພື່ອດັດສົມເງິນຕາຕ່າງປະເທດຂອງລັດຖະບານ ໃນກໍລະນີທີ່ຈໍາເປັນທີ່ສຸດ.

**ມາດຕາ 17. ພື້ນຖານການກໍານົດໂຄງປະກອບ**

ໂຄງປະກອບຄັງແຮເພື່ອດັດສົມເງິນຕາຕ່າງປະເທດຂອງລັດຖະບານ ຕ້ອງກໍານົດບົນພື້ນຖານດັ່ງນີ້:

1. ອັດຕາສ່ວນສະກຸນເງິນຕາຕ່າງປະເທດ ທີ່ໃຊ້ເຂົ້າໃນການນໍາເຂົ້າ-ສົ່ງອອກສິນຄ້າ-ບໍລິການຂອງ ສປປ ລາວ;
2. ອັດຕາສ່ວນສະກຸນເງິນຕາຕ່າງປະເທດ ທີ່ຕ້ອງຊໍາລະໜີ້ສິນຕ່າງປະເທດ;
3. ຄາດຄະເນທິດທາງການຜັນປ່ຽນ ຂອງສະກຸນເງິນຕາຕ່າງປະເທດແຕ່ລະປະເພດ;
4. ອັດຕາສ່ວນສະກຸນເງິນຕາຕ່າງປະເທດແຕ່ລະປະເພດ ຂອງຄັງສໍາຮອງຂອງບັນດາປະເທດໃນໂລກ.

## *ໝວດທີ IV*
## ຄັງແຊກແຊງອັດຕາແລກປ່ຽນ

**ມາດຕາ 18. ແຫຼ່ງຄັງແຊກແຊງອັດຕາແລກປ່ຽນ**

ຄັງແຊກແຊງອັດຕາແລກປ່ຽນໄດ້ມາຈາກແຫລ່ງຕ່າງໆ ດັ່ງນີ້:

- ຊື້ຈາກຄັງສໍາຮອງເງິນຕາຕ່າງປະເທດຂອງລັດຖະບານ, ຕະຫລາດເງິນຕາລະຫວ່າງທະນາຄານ ແລະສະຖາບັນການເງິນ;

- ດັດສົມຈາກຄັງແຮເພື່ອດັດສົມເງິນຕາຕ່າງປະເທດ ໃນກໍລະນີທີ່ລະດັບຂອງຄັງແຊກແຊງຫາກຕໍ່າກວ່າລະດັບທີ່ກໍານົດໄວ້.

**ມາດຕາ 19. ການນຳໃຊ້**

ຄັງແຊກແຊງອັດຕາແລກປ່ຽນ ໃຫ້ນຳໃຊ້ດັ່ງນີ້:

1. ແຊກແຊງລາຄາເງິນກີບ ໃນຕະຫຼາດເງິນຕາຕ່າງປະເທດຢູ່ພາຍໃນປະເທດ ໃນເມື່ອເຫັນວ່າ ມີຄວາມຈຳເປັນ.
2. ດັດສົມໃຫ້ແກ່ຄັງແຮເພື່ອດັດສົມເງິນຕາຕ່າງປະເທດຂອງລັດຖະບານ ເມື່ອເກີນລະດັບທີ່ກຳນົດໄວ້ ຫຼື ເຫັນວ່າມີຄວາມຈຳເປັນ;
3. ນຳໄປໝູນທຶນ ຕາມທີ່ກຳນົດໄວ້ໃນມາດຕາ 13 ຂໍ້ 2 ຂອງດຳລັດສະບັບນີ້.

**ມາດຕາ 20. ລະດັບຄັງແຊກແຊງອັດຕາແລກປ່ຽນ**

ລະດັບຄັງແຊກແຊງອັດຕາແລກປ່ຽນ ແມ່ນນາຍົກລັດຖະມົນຕີເປັນຜູ້ກຳນົດຕາມການສະເໜີຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ.

ກໍລະນີ ລະດັບເງິນຕາຕ່າງປະເທດໃນຄັງແຊກແຊງອັດຕາແລກປ່ຽນບໍ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການໃນການແຊກແຊງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນຜູ້ມີສິດສະເໜີຕໍ່ນາຍົກລັດຖະມົນຕີຢ່າງເປັນລາຍລັກອັກສອນ ເພື່ອຂໍອະນຸມັດເພີ່ມເງິນໃຫ້ຄັງແຊກແຊງອັດຕາແລກປ່ຽນໂດຍການດັດສົມຈາກຄັງແຮເພື່ອດັດສົມເງິນຕາຕ່າງປະເທດ.

**ມາດຕາ21. ສິດ ແລະໜ້າທີ່ ຂອງຜູ້ວ່າການທະນາຄານ ແຫ່ງ ສປປລາວ**

ກ່ຽວກັບການຄຸ້ມຄອງຄັງແຊກແຊງ

ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ໃນການຕົກລົງກ່ຽວກັບຄັງແຊກແຊງ ອັດຕາແລກປ່ຽນດັ່ງນີ້:

1. ກຳນົດໂຄງປະກອບຂອງຄັງແຊກແຊງອັດຕາແລກປ່ຽນ:
   1.1 ສະກຸນເງິນຕາຕ່າງປະເທດ ທີ່ເຫັນວ່າຈຳເປັນຕ້ອງສຳຮອງໃນຄັງແຊກແຊງ;
   1.2 ອັດຕາສ່ວນຂອງແຕ່ລະສະກຸນເງິນຕາຕ່າງປະເທດໃນຄັງແຊກແຊງ;
2. ຕົກລົງແຊກແຊງອັດຕາແລກປ່ຽນໃນຕະຫຼາດພາຍໃນ ແລະ ຕ່າງປະເທດ ໄດ້ທັນທີເມື່ອເຫັນວ່າຈຳເປັນ ໂດຍ:
   2.1 ກຳນົດເວລາແຊກແຊງ;
   2.2 ປະເພດສະກຸນເງິນຕາທີ່ຕ້ອງແຊກແຊງ;
   2.3 ລະດັບອັດຕາແລກປ່ຽນທີ່ຕ້ອງແຊກແຊງ;
   2.4 ຈຳນວນເງິນຕາທີ່ຕ້ອງແຊກແຊງ;
   2.5 ຮູບການແຊກແຊງມີດັ່ງນີ້:

- ແຊກແຊງຊື້-ຂາຍທັນທີ;
- ແຊກແຊງດ້ວຍການຊື້-ຂາຍລ່ວງໜ້າ;
- ແຊກແຊງດ້ວຍການແລກປ່ຽນຈາກສະກຸນເງິນຕາຕ່າງປະເທດໜຶ່ງ ເປັນອີກສະກຸນເງິນຕາຕ່າງປະເທດໜຶ່ງ;
- ຮູບການແຊກແຊງອື່ນໆ.

2.6 ເປົ້າໝາຍຂອງການແຊກແຊງ.

3. ໂອນເງິນຕາຕ່າງປະເທດສ່ວນທີ່ເກີນລະດັບຂອງຄັງແຊກແຊງທີ່ກຳນົດໄວ້ ໄປເຂົ້າຄັງແຮເພື່ອດັດສົມເງິນຕາຕ່າງປະເທດຂອງລັດຖະບານ.
4. ນຳໃຊ້ເງິນຕາຕ່າງປະເທດໃນຄັງແຊກແຊງເພື່ອໝູນທຶນໃນໄລຍະສັ້ນຢູ່ຕະຫຼາດເງິນພາຍໃນປະ ແລະ ຕ່າງປະເທດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂໍ້ 2 ຂອງດຳລັດສະບັບນີ້.

## *ໝວດທີ V*
## ການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດຂອງລັດ

### ມາດຕາ 22. ສິດ ແລະໜ້າທີ່ ຂອງນາຍົກລັດຖະມົນຕີ

ການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດຂອງລັດ ນາຍົກລັດຖະມົນຕີ ມີສິດດັ່ງນີ້:

1. ຕົກລົງລ່ວງໜ້າເງິນຕາຕ່າງປະເທດ ໃນຄັງແຮເພື່ອດັດສົມເງິນຕາຕ່າງປະເທດຂອງລັດຖະບານ ໃຫ້ແກ່ງົບປະມານ ໃນກໍລະນີຮີບດ່ວນ ແລະ ຈຳເປັນທີ່ສຸດ ຕາມການສະເໜີຂອງລັດຖະມົນຕີວ່າການກະຊວງການເງິນ;
2. ກຳນົດລະດັບຄັງແຮເພື່ອດັດສົມເງິນຕາຕ່າງປະເທດຂອງລັດຖະບານ ແລະ ຄັງແຊກແຊງອັດຕາແລກປ່ຽນຕາມການສະເໜີຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ;
3. ໂອນເງິນຈາກຄັງແຮເພື່ອດັດສົມເງິນຕາຕ່າງປະເທດ ເພີ່ມໃຫ້ຄັງແຊກແຊງອັດຕາແລກປ່ຽນ ຕາມການສະເໜີຂອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ;

### ມາດຕາ 23: ສິດ ແລະໜ້າທີ່ ຂອງຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ

ໂດຍອີງຕາມຄາດໝາຍ ແລະນະໂຍບາຍເງິນຕາ, ການດຸນຊຳລະສາກົນຂອງປະເທດໃນແຕ່ລະປີ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ຂຶ້ນແຜນຄາດຄະເນ ລະດັບຂອງຄັງແຮເພື່ອດັດສົມເງິນຕາຕ່າງປະເທດຂອງລັດຖະບານ ແລະ ຄັງແຊກແຊງອັດຕາແລກປ່ຽນ ເພື່ອສະເໜີຕໍ່ນາຍົກລັດຖະມົນຕີອະນຸມັດ. ຜູ້ວ່າການທະນາຄານແຫ່ງ ສປປ ລາວ ມີຄວາມຮັບຜິດຊອບ ປະຕິບັດສິດ ແລະໜ້າທີ່ຂອງຕົນ ໃນການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດຂອງລັດ ຕາມທີ່ກຳນົດໄວ້ ໃນດຳລັດສະບັບນີ້.

ມາດຕາ 24. **ສິດ ແລະໜ້າທີ່ ຂອງກະຊວງການເງິນ**

1. ສະເໜີນາຍົກລັດຖະມົນຕີ ເພື່ອຂໍອະນຸມັດລ່ວງໜ້າຈາກຄັງແຮເພື່ອດັດສົມເງິນຕາຕ່າງປະເທດ ຂອງລັດຖະບານ ໃຫ້ງົບປະມານ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ແລະຈຳເປັນທີ່ສຸດຂອງລັດ;
2. ນຳໃຊ້ ແລະຊຳລະເງິນລ່ວງໜ້າຄືນ ໃຫ້ແກ່ຄັງແຮເພື່ອດັດສົມເງິນຕາຕ່າງປະເທດຂອງລັດຖະບານ ຕາມການຕົກລົງຂອງນາຍົກລັດຖະມົນຕີ.
3. ນຳໃຊ້ເງິນຕາຕ່າງປະເທດ ໃນຄັງສຳຮອງເງິນຕາຕ່າງປະເທດຂອງລັດຖະບານ ຕາມແຜນງົບປະມານ ແລະຕາມການຕົກລົງເຫັນດີຂອງນາຍົກລັດຖະມົນຕີ.

## ໝວດທີ VI
## ການບັນຊີ, ການລາຍງານ ແລະຂໍ້ຫ້າມ

ມາດຕາ 25. **ການບັນຊີ ແລະ ການລາຍງານຂອງ ທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ມີໜ້າທີ່ຮັບຜິດຊອບເປັນນາຍບັນຊີໃຫ້ລັດຖະບານກ່ຽວກັບການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດຂອງລັດ:

1. ບັນທຶກການໄລ່ລຽງບັນຊີກ່ຽວກັບການເຄື່ອນໄຫວຄັງສຳຮອງເງິນຕາຕ່າງປະເທດຂອງລັດ;
2. ລາຍຮັບ-ລາຍຈ່າຍ ທີ່ເກີດຂຶ້ນກ່ຽວກັບການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດຂອງລັດ ໃຫ້ຈົດເຂົ້າເປັນລາຍຮັບ-ລາຍຈ່າຍ ຂອງທະນາຄານແຫ່ງ ສປປ ລາວ;
3. ສະຫລຸບລາຍງານສະພາບກ່ຽວກັບການຄຸ້ມຄອງ ແລະການນຳໃຊ້ຄັງສຳຮອງເງິນຕາຕ່າງປະເທດຂອງລັດ ໃຫ້ນາຍົກລັດຖະມົນຕີ ຊາບເປັນປະຈຳປີ ຫລື ເມື່ອລັດຖະບານເຫັນວ່າມີຄວາມຈຳເປັນ.

ມາດຕາ 26. **ການລາຍງານຂອງກະຊວງການເງິນ.**

ກະຊວງການເງິນຕ້ອງລາຍງານກ່ຽວກັບການໃຊ້ຈ່າຍເງິນໃນຄັງສຳຮອງເງິນຕາຕ່າງປະເທດຂອງລັດຖະບານໃຫ້ນາຍົກລັດຖະມົນຕີຊາບ ຕາມລະບອບການລາຍງານ ການປະຕິບັດງົບປະມານປະຈຳປີ ຫລືລັດຖະບານຫາກເຫັນວ່າມີຄວາມຈຳເປັນ. ພ້ອມນີ້ ບົດລາຍງານດັ່ງກ່າວກໍຕ້ອງສົ່ງໃຫ້ທະນາຄານແຫ່ງ ສປປ ລາວ ເພື່ອຊາບ ແລະ ຕິດຕາມ.

ມາດຕາ 27 ຂໍ້ຫ້າມ

ຫ້າມທະນາຄານ ແຫ່ງ ສປປລາວ ໝູນທຶນໃນຄັງສຳຮອງເງິນຕາຕ່າງປະເທດຂອງລັດ ໃນບາງທຸລະກິດດັ່ງນີ້:

1. ຫ້າມນຳໃຊ້ເງິນ ໄປຊື້ຮຸ້ນ ຫຼື ຫຼັກຊັບທີ່ມີຄວາມສ່ຽງ ແລະບໍ່ໄດ້ຮັບການຄ້ຳປະກັນຈາກລັດຖະບານ ຫຼື ຈາກສະຖາບັນການເງິນສາກົນ;

2. ຫ້າມນຳໃຊ້ເງິນໃນຄັງດັ່ງກ່າວໃຫ້ກູ້ຢືມ ຫຼື ຄ້ຳປະກັນແກ່ລູກຄ້າ ທີ່ບໍ່ແມ່ນທະນາຄານທຸລະກິດ ຫຼື ສະຖາບັນການເງິນ, ທະນາຄານທຸລະກິດ ຫຼື ສະຖາບັນການເງິນ ທີ່ໄດ້ຮັບການກູ້ຢືມ ຫຼື ຮັບການຄ້ຳປະກັນ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານ ແຫ່ງສປປ ລາວ;

3. ຫ້າມໃຫ້ກູ້ຢືມ ຫຼື ໃຫ້ການຄ້ຳປະກັນແກ່ສະຖາບັນການເງິນ ແລະອົງການທີ່ບໍ່ແມ່ນສະຖາບັນການເງິນ ຫຼື ອົງການຈັດຕັ້ງການເງິນສາກົນ ທີ່ບໍ່ຢູ່ພາຍໃຕ້ການຄຸ້ມຄອງຂອງອົງການການເງິນ-ເງິນຕາຂອງປະເທດຕົນ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 28. ການຈັດຕັ້ງປະຕິບັດ**

ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ລັດຖະມົນຕີວ່າການກະຊວງການເງິນ ມີໜ້າທີ່ຮັບຜິດຊອບຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 29. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫລັງ 30 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດກົດລະບຽບຕ່າງໆ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ທີ່ໄດ້ປະກາດໃຊ້ໃນເມື່ອກ່ອນ ຫາກຂັດກັບດຳລັດສະບັບນີ້ ລ້ວນແຕ່ຍົກເລີກ.

ນາຍົກລັດຖະມົນຕີ

ສີສະຫວາດ ແກ້ວບຸນພັນ